ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

-----===000===-----

ແຂວງຫົວພັນ

ເລກທີ່...07.../ ຈຂ.ຫພ

ຊຳເໜືອ, ວັນທີ...16.../...2.../2016

## ຄຳສັ່ງແນະນຳ

ເຖິງ: ທ່ານ ເຈົ້າເມືອງທຸກໆເມືອງ ທົ່ວແຂວງຫົວພັນ.

ເລື່ອງ: ເພີ່ມທະວີຄວາມເອົາໃຈໃສ່ ໃນການປ້ອງກັນ, ສະກັດກັ້ນ ແລະ ດັບມອດໄຟໄໝ້ລາມປ່າ.

- ອີງຕາມກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ແຫ່ງ ສ ປ ປ ລາວ ສະບັບເລກທີ 03 / ສພຊ, ລົງວັນທີ 21 ຕຸລາ 2003.
- ອີງຕາມຄຳສັ່ງຂອງກະຊວງກະສິກຳ ແລະ ປ່າໄມ້, ສະບັບເລກທີ່ 0334/ກປ, ລົງວັນທີ 24 ກຸມພາ 2015 ວ່າດ້ວຍການເພີ່ມທະວີຄວາມເອົາໃຈໃສ່ໃນການປ້ອງກັນ ແລະ ສະກັດກັ້ນໄຟໄໝ້ລາມປ່າຕິດພັນກັບການກະກຽມຜະລິດເບ້ຍໄມ້, ປູກໄມ້ ແລະ ຟື້ນຟູປ່າໄມ້ສົກປີ 2014-2015.
- ອີງຕາມມາດຕາ 7 ແລະ ມາດຕາ 24 ຂອງກົດໝາຍວ່າດ້ວຍການສະກັດກັ້ນ ແລະ ຕ້ານອັກຄີໄພ ສະບັບເລກທີ 09/ ສພຊ, ລົງວັນທີ 24 ທັນວາ 2007.

ເນື່ອງຈາກສົກປີ 2015-2016 ສະພາບປ່າໄມ້ໃນແຂວງຫົວພັນ ໄດ້ຖືກໄພໜາວຂຸກຄາມ ຊຶ່ງໄດ້ເຮັດໃຫ້ຕົ້ນໄມ້ ແລະ ຫຍ້າໄມ້ຊະນິດຕ່າງໆ ຕາຍເປັນຈຳນວນຫຼວງຫຼາຍຈາກໄພໜາວດັ່ງກ່າວ ຊຶ່ງຈະກໍ່ໃຫ້ເປັນຕົ້ນເພີງເຮັດໃຫ້ໄຟໄໝ້ລາມປ່າ ໃນຊ່ວງລະດູແລ້ງນີ້

## ເຈົ້າແຂວງ ຫົວພັນຈິ່ງອອກຄຳສັ່ງແນະນຳ:

1. ໃຫ້ທ່ານເຈົ້າເມືອງ ທຸກໆເມືອງ ແຕ່ງຕັ້ງຄະນະຮັບຜິດຊອບຊີ້ນຳລວມກ່ຽວກັບວຽກງານເຝົ້າລະວັງ, ສະກັດກັ້ນ ແລະ ດັບມອດໄຟໄໝ້ລາມປ່າ ເຊິ່ງປະກອບດ້ວຍທ່ານຮອງເຈົ້າເມືອງ ເປັນປະທານ, ມີບັນດາຫົວໜ້າຫ້ອງການກ່ຽວຂ້ອງຂອງເມືອງປະກອບເປັນຄະນະ ເພື່ອເຮັດໜ້າທີ່ລົງເຜີຍແຜ່ແນະນຳກ່ຽວກັບການປ້ອງກັນ, ສະກັດກັ້ນ ແລະ ດັບມອດໄຟໄໝ້ລາມປ່າພາຍໃນເມືອງຂອງຕົນ ແລະ ໃຫ້ຄະນະຊີ້ນຳຂັ້ນເມືອງ ເພື່ອແຕ່ງຕັ້ງຄະນະດັ່ງກ່າວຢູ່ທຸກກຸ່ມບ້ານ ແລະ ບ້ານ ໃນຂອບເຂດເມືອງຂອງຕົນຮັບຜິດຊອບ.
2. ໃນກໍລະນີມີໄຟໄໝ້ລາມປ່າ, ຢູ່ພາຍໃນເຂດຄວາມຮັບຜິດຊອບຂອງເມືອງ ຫຼື ບ້ານໃດແມ່ນມອບໃຫ້ເມືອງ ຫຼື ບ້ານນັ້ນເປັນເຈົ້າການ ໃນການປຸກລະດົມດັບມອດໄຟໄໝ້ລາມປ່າ ໃນກໍລະນີເກີດໄຟໄໝ້ລາມປ່າ ຢ່າງຮຸນແຮງຕ້ອງຂໍຮ້ອງຄວາມຊ່ວຍເຫຼືອກຳລັງຈາກປະຊາຊົນ, ທະຫານ ແລະ ກຳລັງຕຳຫຼວດ ທີ່ຢູ່ໃກ້ຄຽງ ເພື່ອຊ່ວຍກັນດັບມອດໃຫ້ທັນການ

3. ມອບຫ້ອງການກະສິກຳ ແລະ ປ່າໄມ້ ແລະ ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ ເປັນເຈົ້າການ ສືບສວນ-ສອບສວນ ຫາສາຍເຫດ ແລະ ຜູ້ກະທຳຜິດນັ້ນມາຮັບຜິດຊອບ ຕາມລະບຽບກົດໝາຍ, ພ້ອມທັງລາຍງານທ່ານເຈົ້າເມືອງ, ພະແນກກະສິກຳ ແລະ ປ່າໄມ້ແຂວງເພື່ອຮັບຊາບ ແລະ ມີວິທີທາງແກ້ໄຂຢ່າງທັນການ.

4. ໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ ແລະ ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ ຕິດຕາມ ກ່ຽວກັບຜົນງານຂອງບຸກຄົນ, ຄອບຄົວ, ລວມໝູ່, ກົມກອງ ແລະ ການຈັດຕັ້ງທີ່ມີຜົນງານດີເດັ່ນ ໃນການປະກອບສ່ວນເຂົ້າໃນການເຝົ້າລະວັງ, ສະກັດກັ້ນ ແລະ ດັບມອດໄຟໄໝ້ລາມປ່າ ເພື່ອນຳສະເໜີຂັ້ນເທິງຍ້ອງຍໍ ແລະ ປະຕິບັດນະໂຍບາຍຕາມລະບຽບການ.

5. ພາຍຫຼັງໄດ້ຮັບຄຳສັ່ງສະບັບນີ້ແລ້ວໃຫ້ຮີບຮ້ອນແຕ່ງຕັ້ງຄະນະຮັບຜິດຊອບ ໃນແຕ່ລະຂັ້ນ ແລະ ຈັດຕັ້ງການເຜີຍແຜ່ເຊື່ອມຊຶມ ຜົນຮ້າຍຂອງໄຟໄໝ້ລາມປ່າໃຫ້ທັນການ; ພາຍລັງຈັດຕັ້ງປະຕິບັດແລ້ວຕ້ອງມີການສະຫຼຸບລາຍງານໃຫ້ຂັ້ນເທິງຮັບຊາບເປັນປົກກະຕິ.

ຄຳສັ່ງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ເຈົ້າແຂວງ ແຂວງຫົວພັນ**

ວັນໄຊ ແພງຊຸມມາ

Vanxay PHENGSOUMMA